ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 02 /ລບ

ນະຄອນຫຼວງວຽງຈັນ, ວັນທີ 04-01-2024

# ດຳລັດ
# ວ່າດ້ວຍປ່າຜະລິດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3350/ກປ, ລົງວັນທີ 17 ກໍລະກົດ 2023

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າຜະລິດ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ສະໜອງໄມ້ ແລະ ເຄື່ອງປ່າຂອງດົງ, ປູກໄມ້ ແລະ ຟື້ນຟູປ່າໄມ້, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ, ການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ປ່າຜະລິດ**

ປ່າຜະລິດ ແມ່ນ ປ່າໄມ້ທຳມະຊາດ ແລະ ປ່າປູກ ລວມທັງທີ່ດິນປ່າໄມ້ ທີ່ໄດ້ກຳນົດເປັນເຂດສະໜອງໄມ້ ແລະ ເຄື່ອງປ່າຂອງດົງເປັນສິນຄ້າ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທີ່ດິນປ່າຜະລິດ** ໝາຍເຖິງ ທີ່ດິນປ່າໄມ້ ລວມທັງ ສາຍນ້ຳ, ຫ້ວຍ, ຮ່ອງ, ຄອງ, ບຶງ, ໜອງນ້ຳ, ທີ່ດິນບໍລິເວນນ້ຳ ແລະ ອື່ນໆ ທີ່ລັດໄດ້ກຳນົດໃຫ້ເປັນປ່າຜະລິດ;
2. **ປ່າປູກ ໝາຍຖິງ** ປ່າໄມ້ທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ປູກຕາມເຂດທີ່ໄດ້ຈັດສັນໃຫ້ ດ້ວຍເຫື່ອແຮງ ຫຼື ທຶນຮອນຂອງຕົນ ທີ່ໄດ້ຂຶ້ນທະບຽນນຳຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອຢັ້ງຢືນກຳມະສິດ ແລະ ແຫຼ່ງທີ່ມາຂອງໄມ້;

3. **ສັນຍາປົກປັກຮັກສາປ່າໄມ້** ໝາຍເຖິງ ເອກະສານກຳນົດຂໍ້ຜູກພັນ ລະຫວ່າງ ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ແລະ ອົງການປົກຄອງບ້ານ ທີ່ມີພື້ນທີ່ຢູ່ໃນ ຫຼື ຕິດກັບປ່າຜະລິດ ໂດຍການຢັ້ງຢືນຈາກອົງການປົກຄອງ ຂັ້ນເມືອງ;
4. **ສັນຍາຮ່ວມຄຸ້ມຄອງປ່າຜະລິດ** ໝາຍເຖິງ ເອກະສານກຳນົດຂໍ້ຜູກພັນການຮ່ວມມື ລະຫວ່າງ ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອດຳເນີນການຄຸ້ມຄອງປ່າຜະລິດ ຢ່າງຮອບດ້ານ;
5. **ລຳດັບມາດຕະການຫຼຸດຜ່ອນຜົນກະທົບ** ໝາຍເຖິງ ວິທີການຫຼຸດຜ່ອນຜົນກະທົບ ຕໍ່ຊີວະນານາພັນ ແລະ ການບໍລິການດ້ານລະບົບນິເວດ ທີ່ໄດ້ຮັບການຍອມຮັບຈາກສາກົນ ຊຶ່ງປະກອບດ້ວຍ ການຫຼີກລ່ຽງ, ຫຼຸດຜ່ອນ, ຟື້ນຟູ ແລະ ການທົດແທນຊີວະນານາພັນແບບຄົບຖ້ວນ ແນ່ໃສ່ທົດແທນຊີວະນານາພັນເທົ່າເດີມ ຫຼື ເພີ່ມຊີວະນານາພັນ;
6. **ການທົດແທນຊີວະນານາພັນແບບຄົບຖ້ວນ** ໝາຍເຖິງ ການດຳເນີນການ ເພື່ອທົດແທນຜົນກະທົບທາງລົບຕໍ່ຊີວະນານາພັນ ທີ່ຍັງເຫຼືອຄ້າງ ແລະ ສືບຕໍ່ມີ ຈາກໂຄງການລົງທຶນ ຫຼັງຈາກທີ່ໄດ້ດຳເນີນມາດຕະການ ຫຼີກລ່ຽງ, ຫຼຸດຜ່ອນ ແລະ ຟື້ນຟູ ຢ່າງເໝາະສົມ;
7. **ການທົດແທນຊີວະນານາພັນເທົ່າເດີມ** ໝາຍເຖິງ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດ ລຳດັບມາດຕະການຫຼຸດຜ່ອນຜົນກະທົບ ຈາກໂຄງການລົງທຶນ ຊຶ່ງຜົນໄດ້ຮັບດັ່ງກ່າວ ໄດ້ບັນລຸຈຸດທີ່ຜົນກະທົບທາງລົບຕໍ່ຊີວະນານາພັນ ຖືກດຸ່ນດ່ຽງ ໂດຍຜົນກະທົບທາງບວກຕໍ່ຊີວະນານາພັນ ຢ່າງເໝາະສົມ;
8. **ການເພີ່ມຊີວະນານາພັນ** ໝາຍເຖິງ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດ ລຳດັບມາດຕະການຫຼຸດ ຜ່ອນຜົນກະທົບ ຈາກໂຄງການພັດທະນາ ຊຶ່ງຜົນໄດ້ຮັບດັ່ງກ່າວ ໄດ້ບັນລຸຈຸດທີ່ຜົນກະທົບທາງບວກ ຕໍ່ຊີວະນານາພັນ ມີລະດັບລື່ນຜົນກະທົບທາງ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານປ່າຜະລິດ**

ວຽກງານປ່າຜະລິດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
2. ຮັບປະກັນ ການຄຸ້ມຄອງປ່າຜະລິດ ເປັນລະບົບ ແລະ ເປັນເອກະພາບໃນທົ່ວປະເທດ;
3. ຮັບປະກັນສະໜອງໄມ້ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ;
4. ຮັບປະກັນການມີສ່ວນຮ່ວມ ຂອງປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ, ມີການປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
5. ຮັບປະກັນຜົນປະໂຫຍດ ຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າຜະລິດ ຕາມກົດໝາຍ.

# ພາກທີ II
# ການກຳນົດປ່າຜະລິດ

**ມາດຕາ 5 ເງື່ອນໄຂການກຳນົດປ່າຜະລິດ**

ການກຳນົດປ່າຜະລິດ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ບໍ່ແມ່ນປ່າປ້ອງກັນ ແລະ ປ່າສະຫງວນ, ບໍ່ກວມເອົາເຂດຍຸດທະສາດປ້ອງກັນຊາດ ແລະ ເຂດກໍ່ສ້າງພື້ນຖານໂຄງລ່າງ ເພື່ອການພັດທະນາ ເຊັ່ນ ເຂດອຸດສາຫະກຳ, ເຂດກະສິກຳຖາວອນ, ເຂດວັດທະນະທຳ ແລະ ທ່ອງທ່ຽວ ແລະ ອື່ນໆ;

2. ບໍ່ລວມເອົາເນື້ອທີ່ປ່າໄມ້, ທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳ ທີ່ໄດ້ຈັດສັນໃຫ້ປະຊາຊົນຄຸ້ມຄອງ ແລະ ນຳໃຊ້;
3. ຫ່າງຈາກຊາຍແດນລະຫວ່າງຊາດ ຢ່າງໜ້ອຍ ຫ້າ ກິໂລແມັດ;
4. ມີເນື້ອທີ່ ຢ່າງໜ້ອຍ ຫ້າພັນ ເຮັກຕາ.

**ມາດຕາ 6 ການກຳນົດປ່າຜະລິດ**

ການກຳນົດປ່າຜະລິດ ແມ່ນ ການກຳນົດເອົາປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນປ່າຜະລິດ ລວມທັງການຂຶ້ນທະບຽນ ແລະ ການປ່ຽນແປງເນື້ອທີ່ ປ່າຜະລິດ.

ການກຳນົດປ່າຜະລິດ ໃຫ້ປະຕິບັດ ດັ່ງນີ້:

1. ດຳເນີນການ ສຳຫຼວດ, ເກັບກຳຂໍ້ມູນກ່ຽວກັບ ຄຸນລັກສະນະຂອງພື້ນທີ່, ສະພາບປ່າໄມ້, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນປ່າໄມ້ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ເຂດທີ່ຈະກຳນົດເປັນປ່າຜະລິດ;
2. ສ້າງແຜນທີ່ສະແດງ ຂອບເຂດທີ່ຕັ້ງ ແລະ ຂໍ້ມູນຈາກການສຳຫຼວດ ເປັນຕົ້ນ ສະພາບພື້ນທີ່, ປ່າໄມ້, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນປ່າໄມ້;
3. ເປີດກອງປະຊຸມປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ເພື່ອຄວາມເປັນເອກະພາບ;
4. ສະເໜີອົງການທີ່ມີສິດອຳນາດ ພິຈາລະນາຮັບຮອງ;
5. ສະເໜີຂຶ້ນທະບຽນທີ່ດິນປ່າຜະລິດ.

**ມາດຕາ 7 ການຮັບຮອງປ່າຜະລິດ**

ລັດຖະບານ ເປັນຜູ້ຮັບຮອງປ່າຜະລິດ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍເປັນເອກະພາບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງ ຂັ້ນແຂວງທີ່ກ່ຽວຂ້ອງ.

**ມາດຕາ 8 ການຂຶ້ນທະບຽນທີ່ດິນປ່າຜະລິດ**

ການຂຶ້ນທະບຽນທີ່ດິນປ່າຜະລິດ ແມ່ນ ການຂຶ້ນທະບຽນອອກໃບຕາດິນລັດ ໃຫ້ແກ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ຢ່າງຖືກຕ້ອງຕາມກົດໝາຍ ເພື່ອສະດວກໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າຜະລິດ.

ປ່າຜະລິດ ທີ່ຖືກຮັບຮອງ ຕາມມາດຕາ 7 ຂອງດຳລັດສະບັບນີ້ ໃຫ້ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ສະເໜີຂຶ້ນທະບຽນອອກໃບຕາດິນປ່າຜະລິດ ນຳຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

# ພາກທີ III
# ກິດຈະການປ່າຜະລິດ
## ໝວດທີ 1
## ການຄຸ້ມຄອງປ່າຜະລິດ

**ມາດຕາ 9 ການຄຸ້ມຄອງປ່າຜະລິດ**

ໃນການຄຸ້ມຄອງປ່າຜະລິດ ນອກຈາກດຳເນີນຕາມກິດຈະການ ທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການສຳຫຼວດປ່າຜະລິດ;
2. ການສ້າງ ແລະ ຮັບຮອງ ແຜນຈັດສັນປ່າຜະລິດ;
3. ການເຜີຍແຜ່ແຜນຈັດສັນປ່າຜະລິດ;
4. ການຈັດຕັ້ງປະຕິບັດແຜນຈັດສັນປ່າຜະລິດ;
5. ການຄ້ຳປະກັນໄມ້ທີ່ຖືກຕ້ອງ;
6. ການຢັ້ງຢືນປ່າໄມ້;
7. ການປະມູນຊື້ ຂາຍ ໄມ້, ເຄື່ອງປ່າຂອງດົງ ແລະ ການແບ່ງປັນລາຍຮັບຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ;
8. ການວາງແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ.

**ມາດຕາ 10 ການສຳຫຼວດປ່າຜະລິດ**

ການສຳຫຼວດປ່າຜະລິດ ແມ່ນ ການເກັບກຳ ແລະ ວິເຄາະຂໍ້ມູນກ່ຽວກັບ ສະພາບປ່າໄມ້, ການນຳໃຊ້ທີ່ດິນ ແລະ ປ່າໄມ້, ບໍລິມາດໄມ້, ຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ, ເສດຖະກິດ-ສັງຄົມຂອງບ້ານທີ່ມີພື້ນທີ່ຢູ່ໃນ ຫຼື ຕິດກັບປ່າຜະລິດ ແລະ ຂໍ້ມູນອື່ນທີ່ຈຳເປັນ ເພື່ອສ້າງແຜນຈັດສັນປ່າຜະລິດ, ກຳນົດພື້ນທີ່ເປັນເຂດທີ່ສາມາດຂຸດຄົ້ນໄມ້, ເຂດປູກໄມ້ເປັນສິນຄ້າ, ຟື້ນຟູປ່າໄມ້, ເຂດອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການສຳຫຼວດປ່າຜະລິດ ໂດຍສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 11 ການສ້າງ ແລະ ຮັບຮອງ ແຜນຈັດສັນປ່າຜະລິດ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນຜູ້ຄົ້ນຄວ້າ ສ້າງແຜນຈັດສັນປ່າຜະລິດ ບົນພື້ນຖານຂໍ້ມູນສຳຫຼວດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງດຳລັດສະບັບນີ້ ໂດຍມີການປະສານສົມທົບກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບ ປ່າຜະລິດ.

ການສ້າງແຜນຈັດສັນປ່າຜະລິດ ແມ່ນ ການກຳນົດພື້ນທີ່ ເປັນເຂດທີ່ສາມາດຂຸດຄົ້ນໄມ້, ເຂດປ່າຟື້ນຟູ, ເຂດປູກໄມ້, ເຂດອະນຸລັກ ແລະ ປົກປັກຮັກສາ ສິ່ງແວດລ້ອມ.

ການສ້າງແຜນຈັດສັນປ່າຜະລິດ ໃຫ້ປະຕິບັດ ດັ່ງນີ້:

1. ເຂດທີ່ມີບໍລິມາດໄມ້ຢືນຕົ້ນ ເກີນ ຫົກສິບ ແມັດກ້ອນ ຕໍ່ເຮັກຕາ ໃຫ້ກຳນົດເປັນເຂດຂຸດຄົ້ນໄມ້;
2. ເຂດທີ່ມີບໍລິມາດໄມ້ ລະຫວ່າງ ຊາວ ຫາ ຫົກສິບ ແມັດກ້ອນ ຕໍ່ເຮັກຕາ ໃຫ້ກຳນົດເປັນປ່າຟື້ນຟູ ແລະ ກຳນົດມາດຕະການ ຄຸ້ມຄອງ ແລະ ປົກປັກຮັກສາ ຕາມລະບຽບການ;
3. ເຂດທີ່ດິນປ່າ ຊຸດໂຊມ ແລະ ປອກໂຫຼ້ນ ບໍລິມາດໄມ້ ຕ່ຳກວ່າ ຊາວ ແມັດກ້ອນ ຕໍ່ເຮັກຕາ ໃຫ້ກຳນົດເປັນເຂດປູກ ໄມ້ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ;
4. ເຂດແຄມນ້ຳ, ຍອດນ້ຳ, ແຫຼ່ງນ້ຳ, ເຂດທີ່ມີຄວາມຄ້ອຍຊັນສູງ, ແຫຼ່ງທີ່ຢູ່ອາໄສສັດປ່າທີ່ຫາຍາກ ແລະ ໃກ້ຈະສູນພັນ ໃຫ້ກຳນົດເປັນເຂດອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ.
5. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຮອງແຜນຈັດສັນປ່າຜະລິດ.

**ມາດຕາ 12 ການເຜີຍແຜ່ແຜນຈັດສັນປ່າຜະລິດ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງການເຜີຍແຜ່ແຜນຈັດສັນປ່າຜະລິດ ດ້ວຍຮູບການຕ່າງໆ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງໃຫ້ແກ່ປະຊາຊົນ ແລະ ການຈັດຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 13 ການຈັດຕັ້ງປະຕິບັດແຜນຈັດສັນປ່າຜະລິດ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດໍາເນີນການຈັດຕັ້ງປະຕິບັດແຜນຈັດສັນປ່າຜະລິດທີ່ໄດ້ຮັບຮອງ ດັ່ງນີ້:

1. ດໍາເນີນການ ຕິດປ້າຍ ແລະ ປັກຫຼັກໝາຍ ເພື່ອໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງປະຊາຊົນ ທີ່ຕັ້ງພູມລໍາເນົາ ຢູ່ໃນ ແລະ ຕິດກັບ ປ່າຜະລິດ ຮັບຮູ້ຂອບເຂດປ່າຜະລິດ ແລະ ເຂດທີ່ຈໍາເປັນ;
2. ສໍາຫຼວດ ໄມ້ ແລະ ເຄື່ອງປ່າຂອງດົງ ກ່ອນການຂຸດຄົ້ນ;
3. ຄັດເລືອກ, ໝາຍ ແລະ ຕີຕາຕົ້ນໄມ້ທີ່ຈະຕັດ;
4. ຄຸ້ມຄອງເຂດຂຸດຄົ້ນ ໄມ້ ແລະ ເຄື່ອງປ່າຂອງດົງ;
5. ສໍາຫຼວດ ຫຼັງການຂຸດຄົ້ນ ໄມ້ ແລະ ເຄື່ອງປ່າຂອງດົງ.

ການຈັດຕັ້ງປະຕິບັດແຜນຈັດສັນປ່າຜະລິດໃນ ເຂດປ່າຟື້ນຟູ, ເຂດປູກໄມ້, ເຂດອະນຸລັກຮັກສາສິ່ງແວດລ້ອມ ໄດ້ກໍານົດໄວ້ໃນໝວດທີ 3 ພາກທີ III ຂອງດໍາລັດສະບັບນີ້.

**ມາດຕາ 14 ການຄໍ້າປະກັນໄມ້ທີ່ຖືກຕ້ອງ**

ການຄໍ້າປະກັນໄມ້ທີ່ຖືກຕ້ອງ ແມ່ນ ການຄຸ້ມຄອງຕ່ອງໂສ້ການສະໜອງໄມ້ຈາກປ່າຜະລິດ ທີ່ໄດ້ຜ່ານການສໍາຫຼວດ, ຂຸດຄົ້ນ ແລະ ເຄື່ອນຍ້າຍ ທີ່ສາມາດກວດສອບແຫຼ່ງທີ່ມາໄດ້ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ມີໃບອະນຸຍາດຂຸດຄົ້ນ ແລະ ເຄື່ອນຍ້າຍ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ຂຸດຄົ້ນໃຫ້ຖືກຕ້ອງຕາມເຂດ ແລະ ຕົ້ນໄມ້ ທີ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດໄດ້ໝາຍ ແລະ ຕີຕາ ປມ;
3. ລາກແກ່, ຂົນສົ່ງ ແລະ ທ້ອນໂຮມ ໄມ້ທ່ອນ ໃຫ້ດໍາເນີນຕາມເສັ້ນທາງ ແລະ ຈຸດທ້ອນໂຮມ ໄມ້ທ່ອນ ຫຼື ສະໜາມໄມ້ທ່ອນ ທີ່ໄດ້ກໍານົດໃຫ້;
4. ໄມ້ທ່ອນ ທີ່ທ້ອນໂຮມຢູ່ສະໜາມ II ຕ້ອງໃຫ້ວັດແທກລະອຽດ ແລະ ຈັດຊັ້ນຄຸນນະພາບ ໃຫ້ຖືກຕ້ອງຕາມລະບຽບການ;
5. ໄມ້ແຕ່ລະທ່ອນ ທີ່ທ້ອນໂຮມຢູ່ສະໜາມ II ຕ້ອງຂຶ້ນບັນຊີ ແລະ ມີຂໍ້ມູນກ່ຽວກັບ ເຂດຂຸດຄົ້ນ, ຕົ້ນທີ່ຂຸດຄົ້ນ ແລະ ຂໍ້ມູນອື່ນທີ່ຈໍາເປັນໃນການກວດສອບແຫຼ່ງທີ່ມາຂອງໄມ້.

**ມາດຕາ 15 ການຢັ້ງຢືນປ່າໄມ້**

ການຢັ້ງຢືນປ່າໄມ້ ແມ່ນ ເພື່ອຢັ້ງຢືນການຄຸ້ມຄອງປ່າຜະລິດ ຕາມມາດຕະຖານ ແນໃສ່ໃຫ້ຜູ້ນໍາໃຊ້ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງຮູ້ວ່າ ໄມ້, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ ໄດ້ມາຈາກປ່າໄມ້ ທີ່ມີການຈັດສັນທີ່ດີ, ສາມາດກວດສອບໄດ້ ແລະ ຖືກຕ້ອງຕາມກົດໝາຍ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງມາດຕະຖານການຢັ້ງຢືນປ່າໄມ້ ໂດຍສອດຄ່ອງກັບມາດຕະຖານຂອງພາກພື້ນ ແລະ ສາກົນ.

**ມາດຕາ 16 ການປະມູນຊື້ ຂາຍ ໄມ້, ເຄື່ອງປ່າຂອງດົງ ແລະ ການແບ່ງປັນລາຍຮັບຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ**

ການຊື້ ຂາຍ ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຂຸດຄົ້ນຈາກປ່າຜະລິດ ຕ້ອງດໍາເນີນການປະມູນແບບເປີດກວ້າງ ແນໃສ່ຮັບປະກັນຜົນປະໂຫຍດສູງສຸດຂອງລັດ.

ການແບ່ງປັນລາຍຮັບຈາກການຂາຍ ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຂຸດຄົ້ນໃນປ່າຜະລິດ ໃຫ້ປະຕິບັດຕາມລັດຖະບັນຍັດວ່າດ້ວຍການແບ່ງປັນລາຍຮັບຈາກການຂາຍໄມ້ທີ່ຂຸດຄົ້ນຈາກປ່າຜະລິດທີ່ປະກາດໃຊ້ແຕ່ລະໄລຍະ.

**ມາດຕາ 17 ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ**

ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແມ່ນ ການຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດການປົກຄອງຂອງບ້ານ ທີ່ຕັ້ງຢູ່ໃນ ແລະ ຕິດກັບປ່າຜະລິດ ເພື່ອໃຫ້ບ້ານ ເປັນເຈົ້າການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ປູກ ແລະ ຟື້ນຟູປ່າໄມ້ທີ່ຊຸດໂຊມ, ສະກັດກັ້ນ ຫຼື ຕ້ານ ໄຟໄໝ້ປ່າ, ໄຟລາມປ່າ, ການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ ແນໃສ່ເຮັດໃຫ້ປ່າໄມ້ໃນເຂດຄຸ້ມຄອງຂອງບ້ານ ມີຄວາມອຸດົມສົມບູນ ແລະ ກາຍເປັນບ້ານພັດທະນາປ່າໄມ້.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ປະສານສົມທົບກັບອົງການປົກຄອງບ້ານ, ພາກສ່ວນທີ່ກ່ຽວຂ້ອງ ແລະ ມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າຜະລິດ ສ້າງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ໂດຍໃຫ້ສອດຄ່ອງກັບແຜນຈັດສັນປ່າຜະລິດ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ທົບທວນ ແລະ ກຳນົດ ປະເພດການນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດປົກຄອງຂອງບ້ານ;
2. ກຳນົດຂອບເຂດ ແລະ ປັກຫຼັກໝາຍປະເພດ ປ່າໄມ້ ແລະ ທີ່ດິນປ່າໄມ້ທີ່ຂັ້ນບ້ານ ຄຸ້ມຄອງປົກປັກຮັກສາ ບົນພື້ນຖານການມີສ່ວນຮ່ວມຂອງອົງການປົກຄອງບ້ານ ແລະ ປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າຜະລິດ;
3. ສ້າງແຜນ ແລະ ກຳນົດມາດຕະການຈັດຕັ້ງປະຕິບັດ ແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແບບມີສ່ວນຮ່ວມຂອງປະຊາຊົນທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າຜະລິດ;
4. ສ້າງຄວາມເຂັ້ມແຂງ ໃຫ້ບ້ານເປັນເຈົ້າການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງປ່າໄມ້ຂັ້ນບ້ານ,ສະກັດກັ້ນ ແລະ ຕ້ານໄຟປ່າ, ການບຸກລຸກ ແລະ ຈັບຈອງ ທີ່ດິນປ່າຜະລິດ.

## ໝວດທີ 2
## ການປົກປັກຮັກສາປ່າຜະລິດ

**ມາດຕາ 18 ການປົກປັກຮັກສາປ່າຜະລິດ**

ການປົກປັກຮັກສາປ່າຜະລິດ ນອກຈາກດຳເນີນຕາມກິດຈະການ ທີ່ໄດ້ກຳນົດໄວ້ໃນ ມາດຕາ 49 ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການສະກັດກັ້ນ ແລະ ຕ້ານ ການບຸກລຸກ, ທຳລາຍ ແລະ ຈັບຈອງ ທີ່ດິນປ່າຜະລິດ;
2. ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ປ່າ;
3. ການກັນ ແລະ ຕ້ານ ພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດ ສັດປ່າ;
4. ການປົກປັກຮັກສາຊີວະນານາພັນ;
5. ການປຸກຈິດສຳນຶກ;
6. ການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບ ຂອງໂຄງການລົງທຶນ.

**ມາດຕາ 19 ການສະກັດກັ້ນ ແລະ ຕ້ານການບຸກລຸກ, ທຳລາຍ ແລະ ຈັບຈອງທີ່ດິນປ່າຜະລິດ**

ການສະກັດກັ້ນ ແລະ ຕ້ານການບຸກລຸກ, ທຳລາຍ ແລະ ຈັບຈອງທີ່ດິນປ່າຜະລິດ ແມ່ນ ການເຄື່ອນໄຫວກວດກາລາດຕະເວນ, ສະກັດກັ້ນ ແລະ ຕ້ານການເຊື່ອມໂຊມຂອງປ່າໄມ້, ການບຸກລຸກ ແລະ ທຳລາຍປ່າໄມ້, ສັດນ້ຳ, ສັດປ່າ ແລະ ການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າຜະລິດ ໂດຍການຕັ້ງຈຸດກວດກາຕາມຈຸດຫຼໍ່ແຫຼມ ຫຼື ເສັ້ນທາງ ເຂົ້າ-ອອກ, ຕັ້ງປ້ອມຍາມປ່າ, ສ້າງແຜນທີ່ລາດຕະເວນ ໃນປ່າຜະລິດ ຕາມເຕັກນິກວິຊາການ ທີ່ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 20 ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງແຜນການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ, ວາງມາດຕະການປ້ອງກັນໄຟໄໝ້ປ່າ ໂດຍການສ້າງໃຫ້ມີເຄືອຂ່າຍ, ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ເຝົ້າລະວັງ ແລະ ສ້າງແລວປ້ອງກັນໄຟໄໝ້ປ່າ ຕາມຈຸດທີ່ມີຄວາມສ່ຽງສູງ ລວມທັງລະດົມ ພາຫະນະ, ວັດຖຸປະກອນ, ແຮງງານ ແລະ ງົບປະມານ ຈາກທຸກພາກສ່ວນ ເຂົ້າໃນການມອດໄຟປ່າ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າຜະລິດ ໂດຍການຕັ້ງຈຸດກວດກາຕາມຈຸດຫຼໍ່ແຫຼມ ຫຼື ເສັ້ນທາງ ເຂົ້າ-ອອກ, ຕັ້ງປ້ອມຍາມປ່າ, ສ້າງແຜນທີ່ລາດຕະເວນ ໃນປ່າຜະລິດ ຕາມເຕັກນິກວິຊາການ ທີ່ກຳນົດໃນລະບຽບການຕ່າງຫາກ.

**ມາດຕາ 21 ການກັນ ແລະ ຕ້ານພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ**

ການກັນ ແລະ ຕ້ານພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ ແມ່ນ ການເຝົ້າລະວັງ, ຕິດຕາມການ ເກີດ, ລະບາດ ພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ ລວມທັງ ຊະນິດພັນຕ່າງຖິ່ນຄຸກຄາມ ເພື່ອປ້ອງກັນ ແລະ ແກ້ໄຂ ໃຫ້ມີປະສິດທິພາບ ແລະ ທັນເວລາ.

ການກັນ ແລະ ຕ້ານພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ ໃຫ້ປະຕິບັດ ດັ່ງນີ້:

1. ເຝົ້າລະວັງ, ສຶກສາຂໍ້ມູນການເກີດ ແລະ ລະບາດ ຂອງເຊື້ອພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ;
2. ຈັດຕັ້ງການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ;
3. ກຳນົດເຂດປອດພະຍາດ ແລະ ເຂດປ້ອງກັນ;
4. ສ້າງສູນຄົ້ນຄວ້າການກັນ ແລະ ຕ້ານພະຍາດ ໄມ້, ບົ້ງ ແມງ, ສັດຕູພືດ ແລະ ພະຍາດສັດປ່າ, ອອກໃບຢັ້ງຢືນການຄຸ້ມຄອງການຜະລິດ, ການແຈກຢາຍ ແລະ ການນຳໃຊ້ແນວພັນໄມ້, ພັນສັດປ່າ ແລະ ພັນພືດ ທີ່ປອດພະຍາດ;
5. ບໍ່ອະນຸຍາດໃຫ້ນຳເຂົ້າ ຫຼື ເຄື່ອນຍ້າຍ ພັນໄມ້, ພັນສັດປ່າ ແລະ ພັນພືດ ທີ່ມີເຊື້ອພະຍາດ ຢ່າງເດັດຂາດ;
6. ມີການເຄື່ອນໄຫວອື່ນທີ່ຈຳເປັນ.

**ມາດຕາ 22 ການປົກປັກຮັກສາຊີວະນານາພັນ**

ການປົກປັກຮັກສາຊີວະນານາພັນ ແມ່ນ ການປົກປັກຮັກສາຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນປ່າຜະລິດ ບໍ່ໃຫ້ຖືກທຳລາຍ ແລະ ໃຫ້ມີຄວາມອຸດົມສົມບູນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາຢູ່ໃນ ແລະ ຕິດກັບປ່າຜະລິດ ເພື່ອປົກປັກຮັກສາຊີວະນານາພັນ ເປັນຕົ້ນ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນສັດປ່າ ແລະ ເຄື່ອງປ່າຂອງດົງ ປະເພດ ຫວງຫ້າມ, ຫາຍາກ ແລະ ໃກ້ຈະສູນພັນ ດ້ວຍການສຳຫຼວດ, ກຳນົດເຂດແຫຼ່ງພັນ, ຂຶ້ນບັນຊີ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນສັດປ່າ ແລະ ເຄື່ອງປ່າຂອງດົງ, ກຳນົດແຜນການອະນຸລັກ, ປົກປັກຮັກສາ ແລະ ຟື້ນຟູ ຕາມຫຼັກວິທະຍາສາດ ແລະ ຕາມກົດໝາຍ.

**ມາດຕາ 23 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ ຄວາມໝາຍ ແລະ ຄວາມສຳຄັນຂອງວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າຜະລິດ ໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ໂດຍຜ່ານ ສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງກິດຈະກຳຕ່າງໆ ກ່ຽວກັບການປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ແຄມນ້ຳ, ແຄມທາງ, ສິ່ງແວດລ້ອມ, ຊີວະນານາພັນ, ສັດນ້ຳ ແລະ ສັດປ່າ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ດຳເນີນວຽກງານປູກຈິດສຳນຶກ ເພື່ອປຸກລະດົມທົ່ວປວງຊົນໃຫ້ເຂົ້າຮ່ວມ, ໃຫ້ການຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າຜະລິດ ແບບຍືນຍົງ.

**ມາດຕາ 24 ການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບຂອງໂຄງການລົງທຶນ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍມີການເຂົ້າຮ່ວມ ຂອງປະຊາຊົນ ທີ່ຕັ້ງພູມລຳເນົາຢູ່ໃນ ຫຼື ຕິດກັບເຂດໂຄງການ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂຄງການລົງທຶນຕ່າງໆ, ຮັບປະກັນການນຳໃຊ້ປ່າຜະລິດ ແບບຍືນຍົງ, ການແບ່ງປັນຜົນປະໂຫຍດຢ່າງເປັນທຳ, ການປະເມີນ ແລະ ຄຸ້ມຄອງຜົນກະທົບຕໍ່ສິ່ງແວດລ້ອມ, ການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ການທົດແທນຄືນຄ່າເສຍຫາຍ.

ໃນໄລຍະກະກຽມໂຄງການ, ຖ້າຜົນຂອງການປະເມີນຄວາມເປັນໄປໄດ້ ບໍ່ສາມາດທົດແທນຊີວະນານາພັນເທົ່າເດີມແລ້ວ ໂຄງການດັ່ງກ່າວ ກໍຈະບໍ່ໄດ້ຮັບການອະນຸມັດ.

## ໝວດທີ 3
## ການພັດທະນາປ່າຜະລິດ

**ມາດຕາ 25 ການພັດທະນາປ່າຜະລິດ**

ການພັດທະນາປ່າຜະລິດ ນອກຈາກດຳເນີນຕາມກິດຈະການ ທີ່ໄດ້ກຳນົດໄວ້ໃນ ໝວດທີ 3 ຂອງພາກທີ IV ຂອງກົດໝາຍວ່າດ້ວຍປ່າໄມ້ແລ້ວ ຍັງມີກິດຈະການ ແລະ ເນື້ອໃນເພີ່ມເຕີມ ດັ່ງນີ້:

1. ການຟື້ນຟູລະບົບນິເວດປ່າໄມ້;
2. ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ;
3. ການພັດທະນາຊີວິດການເປັນຢູ່;
4. ການສ້າງບ້ານພັດທະນາປ່າໄມ້;
5. ການທ່ອງທ່ຽວແບບອະນຸລັກ;
6. ການສຶກສາຄົ້ນຄວ້າ;
7. ລະບົບຂໍ້ມູນ ຂ່າວສານປ່າຜະລິດ.

**ມາດຕາ 26 ການຟື້ນຟູລະບົບນິເວດປ່າໄມ້**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງລະບົບການຟື້ນຟູ ລະບົບນິເວດປ່າໄມ້ ແລະ ຊັບພະຍາກອນທຳມະຊາດ, ກຳນົດ ແລະ ການຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້ ທີ່ຖືກຜົນກະທົບຈາກໂຄງການລົງທຶນ ເປັນຕົ້ນ ການຟື້ນຟູຖິ່ນທີ່ຢູ່ອາໄສຂອງສັດປ່າ ທີ່ໃກ້ຈະສູນພັນ, ການເຄື່ອນຍ້າຍ ຫຼື ປ່ອຍ

ສັດປ່າ ທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ ແລະ ໂຄງການຕ່າງໆ ຄືນສູ່ທຳມະຊາດ ຕາມລະບຽບການ ແລະ ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບຕໍ່ຊີວະນານາພັນ.

**ມາດຕາ 27 ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ**

ການຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ ໃຫ້ປະຕິບັດ ດັ່ງນີ້:

1. ກຳນົດເຂດຟື້ນຟູປ່າໄມ້ແບບທຳມະຊາດ ແລະ ການປູກເສີມ ຢູ່ໃນປ່າຜະລິດ;
2. ກຳນົດຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ ທີ່ແທດເໝາະກັບລະບົບນິເວດຂອງພື້ນທີ່ປ່າດັ່ງກ່າວ;
3. ສ້າງເປັນແຜນການ ຫຼື ໂຄງການຟື້ນຟູປ່າໄມ້ ຕິດພັນກັບກິດຈະກຳສົ່ງເສີມການສ້າງລາຍຮັບໃຫ້ແກ່ປະຊາຊົນ ທີ່ມີຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບປ່າຜະລິດ;
4. ຂຶ້ນທະບຽນເປັນປ່າປູກ ແລະ ຟື້ນຟູ ຕາມລະບຽບການ;
5. ການກຳນົດລະບຽບການນຳໃຊ້ ແລະ ຜົນປະໂຫຍດ ຂອງຜູ້ປູກ ຫຼື ຟື້ນຟູໃຫ້ຈະແຈ້ງ ເຊັ່ນ ການນຳໃຊ້ເຄື່ອງປ່າຂອງດົງທີ່ປູກ ແລະ ຟື້ນຟູ ລວມທັງການອະນຸຍາດໃຫ້ ຂຸດຄົ້ນ ແລະ ນຳໃຊ້ໄມ້ ເພື່ອເປົ້າໝາຍທາງການຄ້າ, ຜົນປະໂຫຍດຈາກການຊື້ ຂາຍ ສິນເຊື່ອກາກບອນປ່າໄມ້ ຫຼື ຜົນປະໂຫຍດອື່ນ ຕາມກົດໝາຍ.

**ມາດຕາ 28 ການພັດທະນາຊີວິດການເປັນຢູ່**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຊຸກຍູ້ ແລະ ສົ່ງເສີມການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບເຂດປ່າຜະລິດ ໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ຢຸດເຊົາການຖາງປ່າເຮັດໄຮ່ ເພື່ອຫັນມາເຮັດອາຊີບຄົງທີ່ ດ້ວຍການຈັດສັນດິນ, ທີ່ຢູ່ອາໄສ ແລະ ເຂດທຳການຜະລິດແບບຄົງທີ່, ຊຸກຍູ້ ແລະ ສົ່ງເສີມ ການຜະລິດເປັນສິນຄ້າ ແລະ ສ້າງເສດຖະກິດຮ່ວມມີຮູບແບບຕ່າງໆ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ເປັນຕົ້ນ ການປູກພືດກະສິກຳ, ລ້ຽງສັດ, ການປະມົງ, ປູກຕົ້ນໄມ້, ເຄື່ອງປ່າຂອງດົງ, ຫັດຖະກຳ ແລະ ການບໍລິການອື່ນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນເຈົ້າການ ສ້າງ ແລະ ສົ່ງເສີມການຈັດຕັ້ງປະຕິບັດແຜນພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນຈັດສັນປ່າຜະລິດ ແລະ ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງທ້ອງຖິ່ນ ໃນແຕ່ລະໄລຍະ.

**ມາດຕາ 29 ການສ້າງບ້ານພັດທະນາປ່າໄມ້**

ການສ້າງບ້ານພັດທະນາປ່າໄມ້ ແມ່ນ ການສ້າງໃຫ້ບ້ານມີຄວາມເຂັ້ມແຂງ ແລະ ເປັນເຈົ້າການ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃນຂອບເຂດການຄຸ້ມຄອງຂອງບ້ານ ຕາມການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງດຳລັດສະບັບນີ້.

ບ້ານພັດທະນາປ່າໄມ້ ມີເງື່ອນໄຂ ດັ່ງນີ້:

1. ປະຊາຊົນພາຍໃນບ້ານ ມີສະຕິເຄົາລົບປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້;
2. ມີແຜນຄຸ້ມຄອງປ່າໄມ້ ຂັ້ນບ້ານ ທີ່ໄດ້ຜ່ານການຮັບຮອງຈາກຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
3. ມີສັນຍາປົກປັກຮັກສາປ່າໄມ້ ແລະ ສັນຍາຮ່ວມຄຸ້ມຄອງປ່າຜະລິດ;
4. ມີລະບົບການຜະລິດກະສິກຳ ແລະ ປ່າໄມ້ ແບບປະສົມປະສານ ທີ່ຍືນຍົງ;
5. ເປັນບ້ານທີ່ມີການປູກ ແລະ ຂະຫຍາຍປ່າໄມ້ ໃຫ້ມີຄວາມອຸດົມສົມບູນ ແລະ ເພີ່ມຄວາມປົກຫຸ້ມຂອງປ່າໄມ້.

**ມາດຕາ 30 ການທ່ອງທ່ຽວແບບອະນຸລັກ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອດຳເນີນການສຳຫຼວດ, ວາງແຜນຈັດສັນ, ຄຸ້ມຄອງ ແລະ ພັດທະນາ ການທ່ອງທ່ຽວທຳມະຊາດ ພ້ອມທັງດຳເນີນການຕິດຕາມ ແລະ ກວດກາ ກິດຈະການທ່ອງທ່ຽວທຳມະຊາດ ໃນປ່າຜະລິດ ເພື່ອປະເມີນຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 31 ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນການສຶກສາຄົ້ນຄວ້າ, ວິໄຈທາງດ້ານວິທະຍາສາດ ເຊັ່ນ ແມງໄມ້, ພັນ ສັດນ້ຳ, ສັດປ່າ ແລະ ພັນພືດທີ່ໃກ້ຈະສູນພັນ, ທໍລະນີສາດ, ຮ່ອງຮອຍປະຫວັດສາດ, ວັດທະນະທຳ, ມວນສານກາກບອນປ່າໄມ້ ແລະ ອື່ນໆ ໃນປ່າຜະລິດ ຊຶ່ງຜູ້ໄດ້ຮັບອະນຸຍາດ ຕ້ອງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ແລະ ລາຍງານຜົນການສຶກສາຄົ້ນຄວ້າ ຢ່າງເປັນລາຍລັກອັກສອນ ໃຫ້ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ພາຍໃນເວລາ ຫົກສິບ ວັນ ນັບແຕ່ວັນສຳເລັດການສຶກສາຄົ້ນຄວ້າ ເປັນຕົ້ນໄປ.

**ມາດຕາ 32 ລະບົບຂໍ້ມູນ ຂ່າວສານປ່າຜະລິດ**

ລະບົບຂໍ້ມູນ ຂ່າວສານປ່າຜະລິດ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ, ວິເຄາະ, ວິໄຈ ແລະ ສະໜອງຂໍ້ມູນ ຂ່າວສານ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ເປັນເຈົ້າໃນການ ສ້າງ, ປັບປຸງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ຂໍ້ມູນ ຂ່າວສານປ່າຜະລິດ. ສຳລັບຖານຂໍ້ມູນ ໃຫ້ເຊື່ອຕໍ່ກັບຖານຂໍ້ມູນ ຂ່າວສານປ່າໄມ້ຂອງພາກພື້ນ ແລະ ສາກົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ໃນລະບົບຂໍ້ມູນ ຂ່າວສານປ່າຜະລິດ ຕາມການອະນຸຍາດຂອງຂະແໜງການກະສິກຳ ແລະ ປ່າໄມ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 4
## ການນຳໃຊ້ປ່າຜະລິດ

**ມາດຕາ 33 ການນຳໃຊ້ປ່າຜະລິດ**

ການນຳໃຊ້ປ່າຜະລິດ ລວມທັງ ໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ນຳໃຊ້ສະເພາະແຕ່ ໃນເຂດທີ່ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງນຳໃຊ້ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ແລະ ຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດຕໍ່ ປ່າໄມ້, ທີ່ດິນປ່າໄມ້ ແລະ ເຄື່ອງປ່າຂອງດົງ, ຄຸນນະພາບຂອງດິນ ແລະ ສິ່ງແວດລ້ອມ.

ການນຳໃຊ້ປ່າຜະລິດ ແບ່ງອອກເປັນ ສີ່ ປະເພດ ດັ່ງນີ້:

1. ນຳໃຊ້ເພື່ອສາທາລະນະປະໂຫຍດ;
2. ນຳໃຊ້ເພື່ອຄອບຄົວ;
3. ນຳໃຊ້ຕາມປະເພນີ;
4. ນຳໃຊ້ເພື່ອທຸລະກິດ.

**ມາດຕາ 34 ການນຳໃຊ້ເພື່ອສາທາລະນະປະໂຫຍດ**

ການນຳໃຊ້ເພື່ອສາທາລະນະປະໂຫຍດ ແມ່ນ ການນຳໃຊ້ປ່າຜະລິດ ເພື່ອຜົນປະໂຫຍດຂອງປະຊາຊົນ, ຊຸມຊົນ ແລະ ສັງຄົມ ເຊັ່ນ ການສຶກສາຄົ້ນຄວ້າ, ການອະນຸລັກລະບົບນິເວດປ່າໄມ້ ແລະ ຊີວະນານາພັນ, ການຊື້ ຂາຍກາກບອນປ່າໄມ້, ການທ່ອງທ່ຽວ ແບບອະນຸລັກ ແລະ ການພັກຜ່ອນ, ການປົກປັກຮັກສາສະ

ຖານທີ່ ທີ່ມີຄວາມສໍາຄັນ, ມີຄຸນຄ່າທາງ ປະຫວັດສາດ ແລະ ວັດທະນະທໍາ ຊຶ່ງການນໍາໃຊ້ນັ້ນຕ້ອງສອດຄ່ອງກັບແຜນຈັດສັນປ່າຜະລິດ ແລະ ກົດໝາຍ.

ສໍາລັບການນໍາໃຊ້ໄມ້ເພື່ອສາທາລະນະປະໂຫຍດ ແມ່ນ ໃຊ້ເຂົ້າໃນການປຸກສ້າງຫ້ອງການ, ສະໂມສອນ, ໂຮງຮຽນ, ສຸກສາລາ, ວັດ, ຂົວ ໂດຍໃຫ້ນໍາໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຂຸດຄົ້ນ ຈາກພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຕາມແຜນການຂຸດຄົ້ນໄມ້ ປະຈໍາປີ ຂອງແຂວງ, ນະຄອນຫຼວງ ທີ່ລັດຖະບານ ໄດ້ຮັບຮອງ.

ສ່ວນການນໍາໃຊ້ເຄື່ອງປ່າຂອງດົງທີ່ບໍ່ເປັນສິນຄ້າ ເພື່ອເປັນຢາປົວພະຍາດ, ການປະດັບປະດາ, ການວາງສະແດງ ແລະ ອື່ນໆ ໃຫ້ເກັບກູ້ຕາມເຂດທີ່ໄດ້ຈັດສັນໃຫ້ເທົ່ານັ້ນ.

### ມາດຕາ 35 ການນໍາໃຊ້ເພື່ອຄອບຄົວ

ການນໍາໃຊ້ເພື່ອຄອບຄົວ ແມ່ນ ການນໍາໃຊ້ ໄມ້ ແລະ ເຄື່ອງປ່າຂອງດົງ ໃນປ່າຜະລິດ ເພື່ອຜົນປະໂຫຍດຂອງປະຊາຊົນໃນບ້ານ.

ສໍາລັບການນໍາໃຊ້ໄມ້ ເພື່ອຜົນປະໂຫຍດຂອງຄອບຄົວ ແມ່ນ ນໍາໃຊ້ ເພື່ອປຸກສ້າງ ແລະ ສ້ອມແປງເຮືອນສະເພາະຄອບຄົວທີ່ຈໍາເປັນ ເຊັ່ນ ຄອບຄົວທີ່ທຸກຍາກ ບໍ່ມີເຮືອນຢູ່, ເຮືອນເກົ່າແກ່, ເປ່ເພ ຫຼື ຖືກເສຍຫາຍຈາກໄພພິບັດ ໂດຍໃຫ້ນໍາໃຊ້ໄມ້ ຈາກປ່າຊົມໃຊ້ຂອງບ້ານ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ຕາມການສະເໜີຂອງອົງການປົກຄອງບ້ານ.

ສ່ວນການນໍາໃຊ້ເຄື່ອງປ່າຂອງດົງ ທີ່ເປັນອາຫານ, ເກີດຕາມລະດູການ ແລະ ຊົມໃຊ້ໃນຊີວິດປະຈໍາວັນຂອງປະຊາຊົນ ສາມາດເກັບກູ້ ແລະ ນໍາໃຊ້ໄດ້.

### ມາດຕາ 36 ການນໍາໃຊ້ຕາມປະເພນີ

ການນໍາໃຊ້ຕາມປະເພນີ ແມ່ນ ການຊົມໃຊ້ປ່າຜະລິດ ລວມທັງໄມ້ ແລະ ເຄື່ອງປ່າຂອງດົງ ທີ່ເຄີຍປະຕິບັດກັນມາ ແລະ ໃຫ້ໃຊ້ສະເພາະໃນຂອບເຂດປ່າໄມ້ບ້ານ ໂດຍສອດຄ່ອງກັບແຜນຈັດສັນປ່າຜະລິດ ແລະ ກົດໝາຍ.

### ມາດຕາ 37 ການນໍາໃຊ້ເພື່ອທຸລະກິດ

ການນໍາໃຊ້ເພື່ອທຸລະກິດ ແມ່ນ ການນໍາໃຊ້ປ່າຜະລິດເຂົ້າໃນການທ່ອງທ່ຽວ, ເປັນສະຖານທີ່ພັກຜ່ອນ, ການບໍລິການດ້ານລະບົບນິເວດປ່າໄມ້, ການຊື້ ຂາຍສິນເຊື່ອກາກບອນປ່າໄມ້, ບັນດາໂຄງການພັດທະນາພື້ນຖານໂຄງລ່າງ, ຂຸດຄົ້ນແຮ່ທາດ, ການຖ່າຍທໍາຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນ ບົນພື້ນຖານການນໍາໃຊ້ແບບຍືນຍົງ ແລະ ປະຕິບັດລໍາດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ຕ້ອງປະຕິບັດຕາມແຜນຈັດສັນປ່າຜະລິດ.

ການນໍາໃຊ້ເຄື່ອງປ່າຂອງດົງໃນປ່າຜະລິດ ເພື່ອເປັນສິນຄ້າໃຫ້ດໍາເນີນໃນເຂດປ່າຜະລິດ ໂດຍສອດຄ່ອງກັບແຜນຈັດສັນປ່າຜະລິດ ແລະ ກົດໝາຍ.

### ມາດຕາ 38 ສິດ ແລະ ພັນທະ ຂອງຜູ້ໄດ້ຮັບອະນຸຍາດນໍາໃຊ້ປ່າຜະລິດ

ຜູ້ໄດ້ຮັບອະນຸຍາດນໍາໃຊ້ປ່າຜະລິດ ມີສິດ ດັ່ງນີ້:

1. ນໍາໃຊ້ປ່າຜະລິດ ຕາມການອະນຸຍາດ;
2. ໄດ້ຮັບຜົນປະໂຫຍດ ຈາກການນໍາໃຊ້ ແລະ ດໍາເນີນກິດຈະການໃນປ່າຜະລິດ ຕາມແຜນຈັດສັນປ່າຜະລິດ, ກົດໝາຍ ແລະ ລະບຽບການ;
3. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ຜູ້ໄດ້ຮັບອະນຸຍາດນໍາໃຊ້ປ່າຜະລິດ ມີພັນທະ ດັ່ງນີ້:

1. ນຳໃຊ້ປ່າຜະລິດ ໃຫ້ຖືກຕ້ອງ ຕາມທີ່ໄດ້ຮັບອະນຸຍາດ ແລະ ສອດຄ່ອງກັບ ແຜນຈັດສັນປ່າຜະລິດ, ກົດໝາຍ ແລະ ລະບຽບການ;
2. ປູກ ແລະ ຟື້ນຟູ, ປົກປັກຮັກສາ ແລະ ພັດທະນາປ່າຜະລິດໃຫ້ອຸດົມສົມບູນ ແລະ ຍືນຍົງ;
3. ປົກປັກຮັກສາສິ່ງແວດລ້ອມ, ຍອດນ້ຳ, ແຫຼ່ງນ້ຳ, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ໃນປ່າຜະລິດ;
4. ເປັນເຈົ້າການ, ເຂົ້າຮ່ວມ ຫຼື ປະກອບສ່ວນໃນການປ້ອງກັນ, ສະກັດກັ້ນ ແລະ ຕ້ານການທຳລາຍປ່າ, ໄຟໄໝ້ປ່າ, ການລັກລອບຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ໃນປ່າຜະລິດ;
5. ຈ່າຍຄ່າສຳລັບການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ, ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ການຮັບຮູ້ສິດນຳໃຊ້ທີ່ດິນ ຂອງປະຊາຊົນ ທີ່ອາໄສຢູ່ໃນປ່າຜະລິດ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນ ກ່ຽວກັບການນຳໃຊ້ທີ່ດິນ ຫຼື ສິດນຳໃຊ້ທີ່ດິນຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ແລະ ອາໄສຢູ່ກ່ອນການຮັບຮອງເປັນປ່າຜະລິດ ເພື່ອຈັດສັນ, ອອກໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ຂຶ້ນທະບຽນອອກໃບຕາດິນ ໃຫ້ພວກກ່ຽວ ຕາມກົດໝາຍ.

## ພາກທີ IV
## ການຫັນປ່ຽນ, ການເຊົ່າ ຫຼື ສຳປະທານ
### ໝວດທີ 1
### ການຫັນປ່ຽນປ່າຜະລິດ ແລະ ທີ່ດິນປ່າຜະລິດ

**ມາດຕາ 40 ການຫັນປ່ຽນປ່າຜະລິດ**

ການຫັນປ່ຽນ ປ່າຜະລິດ ເປັນ ປ່າປ້ອງກັນ ຫຼື ປ່າສະຫງວນ ແມ່ນ ລັດຖະບານ ເປັນຜູ້ອະນຸຍາດ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 41 ການຫັນປ່ຽນທີ່ດິນປ່າຜະລິດ**

ການຫັນປ່ຽນທີ່ດິນປ່າຜະລິດ ແມ່ນ ການຫັນປ່ຽນທີ່ດິນປ່າຜະລິດ ເປັນທີ່ດິນປະເພດອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. ການຫັນປ່ຽນດັ່ງກ່າວ ຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ, ມີຜົນກະທົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມ ແລະ ຕ້ອງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ.

ການຫັນປ່ຽນທີ່ດິນປ່າຜະລິດ ມີ ສອງ ລັກສະນະ ດັ່ງນີ້:

1. ລັກສະນະຖາວອນ ຊຶ່ງເປັນການຫັນປ່ຽນ ເພື່ອຈຸດປະສົງໃດໜຶ່ງ ທີ່ມີລັກສະນະຍາວນານ ເປັນຕົ້ນ ການສ້າງເຂື່ອນໄຟຟ້າ, ອ່າງເກັບນ້ຳ, ຕົບເສົາສາຍສົ່ງໄຟຟ້າ, ຕົບເສົາເຄື່ອງສົ່ງສັນຍານໂທລະສັບ, ທາງດ່ວນ, ທາງລົດໄຟ, ເຂດພັດທະນາພະລັງງານ ລົມ, ແສງຕາເວັນ ຫຼື ການຈັດສັນພູມລຳເນົາ;
2. ລັກສະນະຊົ່ວຄາວ ຊຶ່ງເປັນການຫັນປ່ຽນ ເພື່ອດຳເນີນກິດຈະການໃດໜຶ່ງ ພາຍຫຼັງທີ່ກິດຈະການດັ່ງກ່າວໄດ້ສິ້ນສຸດແລ້ວ ຕ້ອງຫັນປ່ຽນທີ່ດິນດັ່ງກ່າວ ເປັນທີ່ດິນປ່າຜະລິດເໝືອນເດີມ ເປັນຕົ້ນ ເສັ້ນທາງຜ່ານເຂົ້າຫາເຂດກໍ່ສ້າງ, ເຂດຂຸດຄົ້ນບໍ່ແຮ່ ແລະ ສະຖານທີ່ປຸກສ້າງຊົ່ວຄາວ.

**ມາດຕາ 42 ອົງການລັດທີ່ມີສິດຕົກລົງກ່ຽວກັບ ການຫັນປ່ຽນທີ່ດິນປ່າຜະລິດ**

ສະພາແຫ່ງຊາດ ຕົກລົງ ຫັນປ່ຽນທີ່ດິນປ່າຜະລິດ ເປັນທີ່ດິນປະເພດອື່ນ ຕາມການສະເໜີຂອງລັດຖະບານ.

**ມາດຕາ 43 ພັນທະໃນການຫັນປ່ຽນທີ່ດິນປ່າຜະລິດ**

ຜູ້ໄດ້ຮັບອະນຸຍາດໃຫ້ຫັນປ່ຽນທີ່ດິນປ່າຜະລິດ ມີພັນທະ ດັ່ງນີ້:

1. **ການຫັນປ່ຽນທີ່ດິນປ່າຜະລິດ ລັກສະນະຖາວອນ:**
   - ຈ່າຍຄ່າບໍລິການ ທາງດ້ານວິຊາການ;
   - ຈ່າຍຄ່າທຳນຽມການຫັນປ່ຽນທີ່ດິນປ່າໄມ້ ຍົກເວັ້ນກໍລະນີ ການຫັນປ່ຽນທີ່ດິນປ່າໄມ້ ເປັນອ່າງເກັບນ້ຳ;
   - ຈ່າຍຄ່າບໍລິການ ດ້ານລະບົບນິເວດປ່າໄມ້;
   - ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ລວມທັງຄ່າທົດແທນຊີວະນານາພັນ;
   - ຈ່າຍຄ່າປູກໄມ້ທົດແທນ.
2. **ການຫັນປ່ຽນທີ່ດິນປ່າຜະລິດ ລັກສະນະຊົ່ວຄາວ:**
   - ຈ່າຍຄ່າບໍລິການທາງດ້ານວິຊາການ;
   - ຈ່າຍຄ່າທຳນຽມຫັນປ່ຽນທີ່ດິນປ່າໄມ້ ສຳລັບການຫັນປ່ຽນທີ່ດິນປ່າໄມ້ ໃນເຂດຂຸດຄົ້ນບໍ່ແຮ່ແບບເປີດໜ້າດິນ;
   - ຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້;
   - ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ລວມທັງຄ່າທົດແທນຊີວະນານາພັນ;
   - ຈ່າຍຄ່າປູກໄມ້ທົດແທນ ແລະ ຄ່າປັບໜ້າດິນຄືນ.

ການຄິດໄລ່ຄ່າບໍລິການ ແລະ ຄ່າພັນທະຕ່າງໆ ຂ້າງເທິງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ

**ມາດຕາ 44 ການເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ**

ການເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ ແມ່ນ ການນຳໃຊ້ທີ່ດິນປ່າຜະລິດ ເພື່ອການທ່ອງທ່ຽວທຳມະຊາດ, ການຟື້ນຟູປ່າ, ການປູກໄມ້ ແລະ ເຄື່ອງປ່າຂອງດົງ, ການດຳເນີນກິດຈະການລະບົບນິເວດປ່າໄມ້, ການດຳເນີນກິດຈະການແຮ່ທາດ ແລະ ການສຶກສາຄວາມເປັນໄປໄດ້ໃນການຊື້ ຂາຍສິນເຊື່ອກາກບອນປ່າໄມ້.

ການເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ ໃຫ້ດຳເນີນໃນເຂດທີ່ລັດໄດ້ຈັດສັນໄວ້ເທົ່ານັ້ນ ແລະ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສຶກສາຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ຄວາມເໝາະສົມທາງທຳມະຊາດ ເຊັ່ນ ດິນ, ອາກາດ, ຄວາມສູງຈາກລະດັບໜ້ານ້ຳທະເລປານກາງ, ປະລິມານນ້ຳຝົນ, ແຫຼ່ງນ້ຳ, ສິດນຳໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສຳຫຼວດສະພາບ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ປຶກສາຫາລື ເປັນເອກະພາບກັບປະຊາຊົນທ້ອງຖິ່ນ ແລະ ບັນຫາອື່ນທີ່ຈຳເປັນ;
2. ສ້າງບົດວິພາກເສດຖະກິດ-ເຕັກນິກ ໂດຍຜ່ານການຮັບຮອງຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
3. ສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງມາດຕະການແກ້ໄຂຢ່າງເໝາະສົມ ໂດຍການຢັ້ງຢືນຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ;

4. ສ້າງແຜນດຳເນີນງານ ໂດຍເລັ່ງໃສ່ການປົກປັກຮັກສາ ແຫຼ່ງນ້ຳ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່ດິນ, ການພັດທະນາບ້ານ, ການສົ່ງເສີມໃຫ້ປະຊາຊົນມີສ່ວນຮ່ວມ ໃນການດຳເນີນ ການຜະລິດ, ການນຳໃຊ້ເຕັກໂນໂລຊີ ແລະ ອື່ນໆ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ.

ໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ມີຢູ່ໃນເຂດໃຫ້ ເຊົ່າ ຫຼື ສຳປະທານ ແມ່ນ ເປັນກຳມະສິດຂອງລັດ ຍົກເວັ້ນໄມ້ປູກ ທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ.

**ມາດຕາ 45 ການເຊົ່າ ຫຼື ສຳປະທານທີ່ດິນ ປ່າຜະລິດ ເພື່ອກິດຈະການທ່ອງທ່ຽວທຳມະຊາດ**

ການເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ ເພື່ອກິດຈະການທ່ອງທ່ຽວທຳມະຊາດ ສາມາດດຳເນີນໄດ້ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບການອະນຸຍາດ ຈາກລັດຖະບານ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງ ຂັ້ນແຂວງ.

**ມາດຕາ 46 ການເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ ເພື່ອການຟື້ນຟູປ່າ, ການປູກໄມ້ ແລະ ເຄື່ອງປ່າຂອງດົງ**

ການເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ ເພື່ອການຟື້ນຟູປ່າ, ການປູກໄມ້ ແລະ ເຄື່ອງປ່າຂອງດົງ ຕາມແຜນຈັດສັນ ແລະ ປະຕິບັດຕາມຂອບເຂດສິດອະນຸຍາດ ດັ່ງນີ້:

1. ລັດຖະບານ ອະນຸຍາດເນື້ອທີ່ ຫຼາຍກ່ວາ ສິບພັນ ເຮັກຕາ ຂຶ້ນໄປ ຕໍ່ ໜຶ່ງໂຄງການລົງທຶນ ໃນກຳນົດໄລຍະເວລາບໍ່ເກີນ ຫ້າສິບ ປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ສູງສຸດບໍ່ໃຫ້ເກີນ ສາມສິບ ປີ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍການເຫັນດີ ເປັນເອກະພາບກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;
2. ກະຊວງກະສິກຳ ແລະ ປ່າໄມ້ ອະນຸຍາດເນື້ອທີ່ແຕ່ ໜຶ່ງຮ້ອຍ ຫາ ສິບພັນ ເຮັກຕາ ຕໍ່ ໜຶ່ງໂຄງການລົງທຶນ ໃນກຳນົດໄລຍະເວລາບໍ່ເກີນ ຫ້າສິບ ປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ສູງສຸດບໍ່ໃຫ້ເກີນ ສາມສິບ ປີ ຕາມການສະເໜີຂອງກົມປ່າໄມ້ ໂດຍການເຫັນດີເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;
3. ອົງການປົກຄອງ ຂັ້ນແຂວງ ອະນຸຍາດ ເນື້ອທີ່ຕ່ຳກວ່າ ໜຶ່ງຮ້ອຍ ເຮັກຕາລົງມາ ຕໍ່ ໜຶ່ງໂຄງການລົງທຶນ ໃນກຳນົດໄລຍະເວລາບໍ່ເກີນ ຫ້າສິບ ປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ສູງສຸດບໍ່ໃຫ້ເກີນ ສາມສິບ ປີ ຕາມການສະເໜີ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ບົນພື້ນຖານ ຄວາມເປັນເອກະພາບກັບ ພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ພາຍໃນ ແຂວງ ຫຼື ນະຄອນຫຼວງ.

**ມາດຕາ 47 ການເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ ເພື່ອດຳເນີນກິດຈະການລະບົບນິເວດປ່າໄມ້**

ການເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ ເພື່ອດຳເນີນກິດຈະການລະບົບນິເວດປ່າໄມ້ ສາມາດດຳເນີນໄດ້ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງກະສິກຳ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບກະຊວງ ແລະ ອົງການປົກຄອງ ຂັ້ນແຂວງ ທີ່ກ່ຽວຂ້ອງ.

**ມາດຕາ 48 ການສຳປະທານທີ່ດິນປ່າຜະລິດ ເພື່ອດຳເນີນກິດຈະການແຮ່ທາດ**

ລັດຖະບານ ເປັນຜູ້ຕົກລົງການສຳປະທານທີ່ດິນປ່າຜະລິດ ເພື່ອດຳເນີນໂຄງການບໍ່ແຮ່ ທົ່ວໄປ.

ສຳລັບລະບຽບການ ແລະ ກຳນົດໄລຍະເວລາສຳປະທານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍແຮ່ທາດ.

**ມາດຕາ 49 ພັນທະຂອງຜູ້ເຊົ່າ ຫຼື ສຳປະທານ**

ຜູ້ເຊົ່າ ຫຼື ສຳປະທານ ທີ່ດິນປ່າຜະລິດ ມີພັນທະ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ, ແຜນຈັດສັນປ່າຜະລິດ;

2. ຈ່າຍຄ່າເຊົ່າ ຫຼື ຄ່າສຳປະທານ ແລະ ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ເປັນຕົ້ນ ຄ່າການບໍລິການທາງດ້ານວິຊາການ, ຄ່າປັບໜ້າດິນ, ຄ່າປູກຕົ້ນໄມ້, ຄ່າຟື້ນຟູປ່າທົດແທນຄືນ, ຄ່າປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ຄ່າທຳນຽມອື່ນ ຕາມກົດໝາຍ;
3. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ດ້ານລະບົບນິເວດປ່າໄມ້ ເຂົ້າກອງທຶນປົກປັກຮັກສາປ່າໄມ້;
4. ຮັບຜິດຊອບຈ່າຍຄ່າສິ້ນເປືອງ;
5. ຈ່າຍຄ່າທຳນຽມການທັບປ່ຽນທີ່ດິນປ່າໄມ້;
6. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າຜະລິດ;
7. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີ V
# ກອງຄຸ້ມຄອງປ່າຜະລິດ

### ມາດຕາ 50 ການຄຸ້ມຄອງ ແລະ ບໍລິຫານປ່າຜະລິດ

ປ່າຜະລິດ ແຕ່ລະແຫ່ງ ມີກອງຄຸ້ມຄອງປ່າຜະລິດ ໜຶ່ງກອງ ຄຸ້ມຄອງ ແລະ ບໍລິຫານ.

ປ່າຜະລິດ ແມ່ນ ອົງການປົກຄອງ ຂັ້ນແຂວງ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ ໂດຍແມ່ນພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນເສນາທິການໂດຍກົງ.

### ມາດຕາ 51 ກອງຄຸ້ມຄອງປ່າຜະລິດ

ກອງຄຸ້ມຄອງປ່າຜະລິດ ມີຫົວໜ້າກອງ ໜຶ່ງທ່ານ, ຮອງຫົວໜ້າ ແລະ ພະນັກງານວິຊາການ ຈຳນວນໜຶ່ງ ພ້ອມທັງປະກອບເຄື່ອງມື, ວັດຖຸປະກອນ, ພາຫະນະ, ອາວຸດ ແລະ ຈັດສັນງົບປະມານຮັບໃຊ້ ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຕາມຄວາມເໝາະສົມ.

ກອງຄຸ້ມຄອງປ່າຜະລິດ ມີຖານະທຽບເທົ່າຂະແໜງປ່າໄມ້ແຂວງ, ຫົວໜ້າກອງຄຸ້ມຄອງປ່າຜະລິດ ມີຕຳແໜ່ງບໍລິຫານປະເພດ ຫ້າ ຂຶ້ນໄປ, ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການສະເໜີຂອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

# ພາກທີ VI
# ການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ

### ມາດຕາ 52 ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ

ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ;
4. ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານ ເສດຖະກິດ-ການເງິນບ້ານ;
5. ກອງຄຸ້ມຄອງປ່າຜະລິດ.

**ມາດຕາ 53 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແລະ ລະບຽບການ ກ່ຽວກັບປ່າຜະລິດ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ່າຜະລິດ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າຜະລິດ;
4. ອອກ, ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານປ່າຜະລິດ;
5. ສ້າງຕັ້ງກອງຄຸ້ມຄອງປ່າຜະລິດ;
6. ຊີ້ນຳ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ຕິດຕາມ ກວດກາການຈັດຕັ້ງປະຕິບັດວຽກງານປ່າຜະລິດ ໃນຂອບເຂດທົ່ວປະເທດ;
7. ຄຸ້ມຄອງ, ກຳນົດບັນຊີ ໄມ້ ແລະ ເຄື່ອງປ່າຂອງດົງ ທຸກປະເພດ ທີ່ບໍ່ທັນໄດ້ປຸງແຕ່ງ ເປັນຜະລິດຕະພັນສຳເລັດຮູບ;
8. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ຖານຂໍ້ມູນ ຂ່າວສານປ່າຜະລິດ;
9. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນ ໄມ້ ແລະ ເຄື່ອງປ່າຂອງດົງ;
10. ຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີ ດ້ານການຂະຫຍາຍພັນ ໄມ້ ແລະ ເຄື່ອງປ່າຂອງດົງ;
11. ສະເໜີລັດຖະບານພິຈາລະນາໃນການ ນຳໃຊ້, ເຊົ່າ, ສຳປະທານ ແລະ ຫັນປ່ຽນປ່າຜະລິດ ແລະ ທີ່ດິນປ່າຜະລິດ;
12. ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານປ່າຜະລິດ;
13. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າຜະລິດ;
14. ປະສານສົມທົບ ກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດ ວຽກງານປ່າຜະລິດ;
15. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ່າຜະລິດ;
16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າຜະລິດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ,ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າຜະລິດ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າຜະລິດ;
3. ອອກ ຫຼື ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານປ່າຜະລິດ;
4. ຊີ້ນຳ, ຄຸ້ມຄອງ, ພັດທະນາ, ປົກປັກຮັກສາ, ນຳໃຊ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ວຽກງານປ່າຜະລິດ;
5. ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານປ່າຜະລິດ;
6. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນ ໄມ້ ແລະ ເຄື່ອງປ່າຂອງດົງ;
7. ຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີ ດ້ານການຂະຫຍາຍພັນ ໄມ້ ແລະ ເຄື່ອງປ່າຂອງດົງ;

8. ສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາການ ເຊົ່າ, ສຳປະທານ ແລະ ທັນປ່ຽນ ປ່າຜະລິດ ແລະ ທີ່ດິນປ່າຜະລິດ;
9. ສະເໜີກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການສ້າງຕັ້ງກອງຄຸ້ມຄອງປ່າຜະລິດ;
10. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າຜະລິດ;
11. ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານປ່າຜະລິດ;
12. ປະສານສົມທົບກັບພະແນກການ, ອົງການປົກຄອງ ຂັ້ນເມືອງ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າຜະລິດ;
13. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ່າຜະລິດ;
14. ສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານປ່າຜະລິດ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;
15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າຜະລິດ;
2. ໂຄສະນາ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າຜະລິດ;
3. ອອກ ຫຼື ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານປ່າຜະລິດ;
4. ຊີ້ນຳ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ຕິດຕາມ ກວດກາການຈັດຕັ້ງປະຕິບັດວຽກງານປ່າຜະລິດ;
5. ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານປ່າຜະລິດ;
6. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ແຫຼ່ງແນວພັນ ໄມ້ ແລະ ເຄື່ອງປ່າຂອງດົງ;
7. ເຂົ້າຮ່ວມໃນການຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີ ດ້ານການຂະຫຍາຍພັນ ໄມ້ ແລະ ເຄື່ອງປ່າຂອງດົງ;
8. ສະເໜີພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ພິຈາລະນາການເຊົ່າ, ສຳປະທານ ແລະ ທັນປ່ຽນ ປ່າຜະລິດ;
9. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າຜະລິດ;
10. ສະເໜີສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານປ່າຜະລິດ;
11. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າຜະລິດ;
12. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານປ່າຜະລິດ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ອົງການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ໜ້າທີ່ຂອງຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າພະລິດ;
2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າພະລິດ;
3. ເຂົ້າຮ່ວມຕິດຕາມ ກວດກາ ແລະ ປະເມີນຜົນ ກ່ຽວກັບການດຳເນີນວຽກງານປ່າພະລິດ;
4. ເຂົ້າຮ່ວມຝຶກອົບຮົມດ້ານວິຊາການກ່ຽວກັບ ການຄຸ້ມຄອງປ່າພະລິດ ແບບຍືນຍົງ;
5. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ການປູກໄມ້ ແລະ ຟື້ນຟູປ່າ ຕາມແຜນຈັດສັນປ່າໄມ້ ຂັ້ນບ້ານ;
6. ຕິດຕາມ, ສະກັດກັ້ນ ແລະ ຕ້ານການເຄື່ອນໄຫວທີ່ຜິດກົດໝາຍ ໃນປ່າພະລິດ ເປັນຕົ້ນ ການລັກລອບຕັດໄມ້, ການຈູດປ່າ, ໄຟໄໝ້ລາມປ່າ, ການລັກລອບລ່າສັດ, ການເກັບກູ້ເຄື່ອງປ່າຂອງດົງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ທຸກການກະທຳທີ່ເປັນການທຳລາຍປ່າໄມ້, ຈັບຈອງ ທີ່ດິນປ່າໄມ້ ແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຢ່າງທັນການ;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າພະລິດ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 ສິດ ແລະ ໜ້າທີ່ຂອງກອງຄຸ້ມຄອງປ່າພະລິດ**

ກອງຄຸ້ມຄອງປ່າພະລິດ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າພະລິດ;
2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ໂຄງການ, ກ່ຽວກັບວຽກງານປ່າພະລິດ;
3. ຊີ້ນຳ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານປ່າພະລິດ;
4. ສຳຫຼວດ, ເກັບກຳຂໍ້ມູນ ແລະ ສ້າງແຜນຈັດສັນປ່າພະລິດ;
5. ສະເໜີຂະຫຍາຍເນື້ອທີ່, ຂຶ້ນທະບຽນ, ຫັນປ່ຽນ ປ່າພະລິດ ແລະ ທີ່ດິນປ່າພະລິດ;
6. ຕິດຕາມ ແລະ ສຶກສາຄົ້ນຄວ້າ ເຕັກນິກວິຊາການ, ເຕັກໂນໂລຊີ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຊີວະນານາພັນ ໃນປ່າພະລິດ;
7. ເປັນເຈົ້າການ ຕິດຕາມ, ສະກັດກັ້ນ ແລະ ຕ້ານການເຄື່ອນໄຫວ ອັນບໍ່ດີທີ່ມີຜົນກະທົບ ຕໍ່ປ່າພະລິດ ແລະ ທີ່ດິນປ່າພະລິດ;
8. ຝຶກອົບຮົມດ້ານວິຊາການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າພະລິດ ແລະ ທີ່ດິນປ່າພະລິດ ໃຫ້ແກ່ພະນັກງານ ແລະ ປະຊາຊົນ;
9. ເຊັນສັນຍາປົກປັກຮັກສາປ່າໄມ້ ແລະ ສັນຍາຮ່ວມຄຸ້ມຄອງປ່າພະລິດ;
10. ປະສານສົມທົບກັບອົງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານປ່າພະລິດ;
11. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານປ່າພະລິດ ຕາມການມອບໝາຍ;
12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າພະລິດ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 58 ເນື້ອໃນການກວດກາ**

ການກວດກາ ວຽກງານປ່າພະລິດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນິຕິກຳ ກ່ຽວກັບ ວຽກງານປ່າຜະລິດ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານປ່າຜະລິດ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 59 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍ ຖືກກວດກາຊາບລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ VII
## ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ

**ມາດຕາ 60 ເຄື່ອງແບບ**

ພະນັກງານ ແລະ ເຈົ້າໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ມີເຄື່ອງແບບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

**ມາດຕາ 61 ເຄື່ອງໝາຍ ແລະ ຕາປະທັບ**

ອົງການຄຸ້ມຄອງ ແລະ ກວດກາ ວຽກງານປ່າຜະລິດ ມີເຄື່ອງໝາຍ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ວາງອອກ.

## ພາກທີ VIII
## ງົບປະມານນຳໃຊ້ ໃນວຽກງານປ່າຜະລິດ

**ມາດຕາ 62 ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບ ທີ່ນຳໃຊ້ເຂົ້າໃນວຽກງານປ່າຜະລິດ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຂອງລັດ ທັງພາຍໃນ ແລະ ຕ່າງປະເທດ;
5. ຄ່າສຳລັບການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ;
6. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 63 ການຄຸ້ມຄອງ ແລະ ການນຳໃຊ້ ງົບປະມານ**

ການຄຸ້ມຄອງ ແລະ ນຳໃຊ້ ງົບປະມານ ເຂົ້າໃນວຽກງານປ່າຜະລິດ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ການນຳໃຊ້ງົບປະມານ ແມ່ນ ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ບັນດາກິດຈະກຳ ປ່າຜະລິດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 64 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດ ວຽກງານປ່າຜະລິດ ຢ່າງຖືກຕ້ອງ ຕາມເປົ້າໝາຍ ແລະ ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 65 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກລົງໂທດ ໂດຍການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 66 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 67 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 20 ກຸມພາ 2024 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍ ການຄຸ້ມຄອງປ່າຜະລິດແບບຍືນນານ ສະບັບເລກທີ 59/ນຍ, ລົງວັນທີ 02 ພຶດສະພາ 2002.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ